ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດວິສາຫະກິດໄຟຟ້າລາວ

ເລກທີ: 3328 /ຟຟລ.ຫຟຟລ.
ນະຄອນຫຼວງວຽງຈັນ, ວັນທີ: 07 AUG 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນປີ 2026 ເພື່ອເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຮ່ວມການປະມູນເປີດກວ້າງພາຍໃນ (ປະມູນຫືອໜ່ວຍລາຄາ) ກ່ຽວກັບການຈັດຊື້ ນ້ຳດື່ມ ຂະໜາດ 18 ລິດ ແລະ ຂະໜາດ 350 ມລ ເພື່ອມາຮັບໃຊ້ບໍລິຫານປິ່ນອອ້ມ ໃນລັດວິສາຫະກິດໄຟຟາລາວ ຂອງ ພະແນກສະໜັບສະໜູນ ທີ່ຂຶ້ນກັບ ຫ້ອງການໄຟຟ້າລາວ; ໄລຍະການສະໜອງ ທັງໝົດແມ່ນ 3 ປີ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017 ແລະ ເອກະສານ ຄຳແນະນຳການໃຊ້ກົດ ໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄຳແນະນຳເພີ້ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດ ແລະ ໃບມອບພັນທະອາກອນປີ 2024-2025 ທີ່ຖືກຕ້ອງຕາມກົດໝາຍ.
4. ບໍລິສັດໃດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈ ສາມາດເຮັດໜັງສືສະເໜີ ເພື່ອຊື້ຊອງປະມູນ ແລະ ຮັບເອກະສານປະມູນໄດ້ທີ່ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316133-1117, ພະແນກຈັດຊື້-ຈັດຈ້າງ ໃນໂມງລັດຖະການ, ເລີ່ມແຕ່ວັນທີ: 02/09/2026 ໄປຈົນເຖິງ 08/10/2026 ໃນລາຄາ 1,000,000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ: 08/10/2026 ທີ່ຫ້ອງປະຊຸມຊັ້ນ 08 ຫ້ອງ 801, ສຳນັກງານໃຫຍ່. ຊອງປະມູນໃດສົ່ງຊ້າກວ່າເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການຈັດຊື້ ຟຟລ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ.
6. ຜູ້ປະມູນຕ້ອງໄດ້ສະໜອງຫນັງສືຄ້ຳປະກັນຊອງປະມູນໃນມູນຄ່າ 2%ຂອງລາຄາທີ່ສະເໜີຮ່ວມການປະມູນ (ເປັນໜັງສືຄ້ຳປະກັນຈາກທະນາຄານ ຫຼື ເປັນແຊັກວີຊ່າ ເທົ່ານັ້ນທີ່ນຳໃຊ້ຈົນເຖິງວັນທີ 08/01/2027).

**ຜູ້ອຳນວຍການໃຫຍ່**

ບໍລິສັດລັດ ວິສາຫະກິດໄຟຟ້າລາວ ELECTRICITE DU LAOS

**ປອ ທອງສະຫວັນ ແກ້ວດູນຍົງ**
**ຮອງຜູ້ອຳນວຍການ**